ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

2096----

ເລກທີ /ຫອຄ.ບພ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2020

# ແຈ້ງການ

ເຖິງ: ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດ ພາຍໃນນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມປະມູນສົມທຽບລາຄາກ່ຽວກັບການສະໜອງ ເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ, ການສ້ອມແປງບຳລຸງຮັກສາລະບົບແອເຢັນ ແລະ ພາຫະນະ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳສົກປີ 2021

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ (ສະບັບປັບປຸງໃໝ່) ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຕ່າງໆ ພາຍໃນນະຄອນຫຼວງວຽງຈັນ, ທີ່ມີຈຸດປະສົງ ຢາກເຂົ້າຮ່ວມປະມູນສົມທຽບລາຄາ (ຕາມລາຍການຕາຕະລາງຄັດຕິດມາພ້ອມ) ເພື່ອຕອບສະໜອງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳສົກປີ 2021 ລາຍລະອຽດມີດັ່ງລຸ່ມນີ້:

1. ການຕອບສະໜອງອຸປະກອນເຄື່ອງຮັບໃຊ້ຫ້ອງການ, ເຄື່ອງອານາໄມສຳນັກງານ, ເຄື່ອງຮັບແຂກການນຳ ແລະ ເຄື່ອງບຳລຸງຮັກສາພາຫະນະ.
2. ການຕອບສະໜອງເຄື່ອງຄອມພິວເຕີ, ເຄື່ອງກັອບປີ, ນ້ຳມຶກປີ້ນເຕີ, ນ້ຳມຶກເຄື່ອງກັອບປີ ແລະ ການຕິດຕັ້ງ ສ້ອມແປງ, ປ່ຽນຖ່າຍອາໄລ່ລະບົບເຄື່ອງ IT.
3. ການຕອບສະໜອງອຸປະກອນບຳລຸງຮັກສາສຳນັກງານ ເຊັ່ນ: ການສ້ອມແປງປ່ຽນຖ່າຍອາໄລ່ ລະບົບແອເຢັນ, ລະບົບໄຟຟ້າ ແລະ ວຽກກໍ່ສ້າງສ້ອມແປງຂະໜາດນ້ອຍ.
4. ການບໍລິການສ້ອມແປງປ່ຽນຖ່າຍອາໄລ່ ແລະ ບຳລຸງຮັກສາພາຫະນະ.

ໃນ 04 ລາຍການທີ່ກ່າວມາຂ້າງເທິງນີ້ ບໍລິສັດໃດ ຫຼື ວິສາຫະກິດໃດ ທີ່ຈະເຂົ້າຮ່ວມການປະມູນ ແມ່ນມີສິດເລືອກໄດ້ພຽງ 01 ລາຍການເທົ່ານັ້ນ ແລະ ຕ້ອງປະຕິບັດຕາມລະບຽບ ແລະ ເງື່ອນໄຂ ດັ່ງນີ້:

I. ກຳນົດຂອບເຂດເວລາ:

- ສາມາດພົວພັນຊື້ຊອງປະມູນໄດ້ທີ່ ພະແນກບໍລິຫານ ແລະ ພິທີການ ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ, ນັບແຕ່ວັນທີ 7-11/12/2020 ແລະ ສົ່ງຊອງປະມູນໃຫ້ຄະນະກຳມະການປະມູນ ບໍ່ໃຫ້ກາຍ ເວລາ 11:30 ໂມງ ຂອງວັນທີ 22/12/2020 ທີ່ຫ້ອງການ ຊັ້ນ 04 ແລະ ຈະມີການເປີດຊອງປະມູນ ໃນເວລາ 13:30 ໂມງ ຂອງວັນດຽວກັນ.
- ລາຄາຊອງປະມູນຊອງລະ 300.000 ກີບ ຕໍ່ ຊອງ (ເງິນຊື້ຊອງປະມູນນີ້ແມ່ນບໍ່ໄດ້ສົ່ງຄືນ).
- ພາຍຫຼັງສຳເລັດການເປີດຊອງປະມູນ ພາຍໃນ 07 ວັນ ຈະແຈ້ງຜົນການປະມູນ ໃຫ້ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຮັບຊາບ ແລະ ແຈ້ງເຊີນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ເຂົ້າມາຮ່ວມຕົກລົງເຈລະຈາ ເຊັນສັນຍາກັບຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າຕາມລະບຽບການ.

II. ເອກະສານທີ່ຕ້ອງປະກອບຂັດຕິດມາພ້ອມຊອງປະມູນ:

- ຕ້ອງມີໃບທະບຽນວິສາຫະກິດທີ່ຖືກຕ້ອງ.
- ຕ້ອງມີໃບທະບຽນອາກອນ ຫຼື ໃບຢັ້ງຢືນການເສຍອາກອນ ປະຈຳປີ 2020.
- ຕ້ອງມີໃບບິນອາກອນສະເພາະຂອງວິສາຫະກິດ.
- ຕ້ອງມີໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການທີ່ກ່ຽວຂ້ອງ (ຖ້າມີ).
- ຕ້ອງມີແຜນວາດທີ່ຕັ້ງຂອງວິສາຫະກິດ, ທີ່ຢູ່, ເບີໂທ ຫຼື Email.
- ຕ້ອງລະບຸບັນດາເຄື່ອງຂອງ, ອຸປະກອນ ແລະ ສິນຄ້າ ຜະລິດຈາກປະເທດໃດ (ຕາມລາຍການທີ່ກຳນົດຢູ່ໃນຕາຕະລາງ, ພ້ອມທັງສະຫຼຸບສັງລວມຕົວເລກທັງໝົດຂອງແຕ່ລະລາຍການ ແລະ ຕົວເລກລວມຂອງແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ຊັດເຈນ), ທຸກໆລາຍການຕ້ອງໃສ່ລາຄາໃຫ້ຄົບຕາມຕາຕະລາງ (ລາຄາທີ່ໃສ່ໃນຕາຕະລາງແມ່ນລວມອາກອນທັງໝົດ), ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງ ຖືວ່າວິສາຫະກິດນັ້ນແມ່ນຖືກສະຫຼະສິດ ຈະບໍ່ຮັບພິຈາລະນາ.

III. ເງື່ອນໄຂມາດຖານ ແລະ ຄວາມພ້ອມຂອງວິສາຫະກິດ:

- ວິສາຫະກິດຕ້ອງຕອບສະໜອງວັດຖຸອຸປະກອນໃຫ້ຄູ່ສັນຍາ ຕາມກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ.
- ຕ້ອງເປັນວິສາຫະກິດທີ່ມີການເຄື່ອນໄຫວດຳເນີນທຸລະກິດທີ່ມີປະສົບການ ຢ່າງໜ້ອຍ 02 ປີ ຂຶ້ນໄປ.
- ວິສາຫະກິດຕ້ອງມີວິຊາການຂອງຕົນ ທີ່ມີປະສົບການໃນການຕິດຕັ້ງ, ສ້ອມແປງ ຢ່າງໜ້ອຍ 02 ຄົນຂຶ້ນໄປ.

IV. ເງື່ອນໄຂການຊຳລະສະສາງ:

ການຊຳລະສະສາງແມ່ນນຳໃຊ້ຮ່ອງເງິນງົບປະມານ ປະຈຳສົກປີ 2021 ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດ້ວຍລະບົບເງິນໂອນ (ປະຕິບັດຕາມລະບຽບຂອງກະຊວງການເງິນ) ຊຶ່ງການຊຳລະແມ່ນຈະໄດ້ຊຳລະໜີ້ສິນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ປະຈຳປີ 2020 ສຳເລັດແລ້ວກ່ອນທັງໝົດ ຈຶ່ງຊຳລະໜີ້ສິນຕາມມູນຄ່າລວມທັງໝົດຂອງແຕ່ລະລາຍການ ໃຫ້ວິສາຫະກິດ ທີ່ຊະນະການປະມູນປະຈຳປີ 2021 ໂດຍປະຕິບັດຕາມສັນຍາທີ່ຕົກລົງຮ່ວມກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດທີ່ມີຄວາມພ້ອມຕາມເງື່ອນໄຂ ແລະ ຈຸດປະສົງທີ່ກ່າວມາຂ້າງເທິງນີ້ດ້ວຍ.

ຫົວໜ້າຫ້ອງການ

ເບີໂທຕິດຕໍ່: 021 412000, 020 99722047

ຫ້ອງການ

ນ. ບານສະຕິ ເທບພະວົງ